ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບົດສະຫຼຸບ 1 ປີ
ໂຄງການຄຸ້ມຄອງປ່າປ້ອງກັນ ແຫ່ງຊາດນ້ຳມ່ອນ-ນ້ຳຍ້ອງ
CBI 001-II
ສົກປີ2019

ໂດຍ: ພະແນກພະແນກກະສິກຳ ແລະ ປ່າໄມ້ ແຂວງ

I. ພາກສະເໜີ

ໂຄງການຄຸ້ມຄອງປ່າປ້ອງກັນແຫ່ງຊາດ ນ້ຳມ່ວນ - ນ້ຳຍວງ " ໂຄງການນີ້ໄດ້ຮັບການສະໜັບສະໜຸນ ຈາກ ກປສ ຊຶ່ງແມ່ນທຶນປະກອບສ່ວນ ຂອງ ໂຄງການເຂື່ອນໄຟຟ້າເທີນຫິນພາກຂະຫຍາຍໃຫ້ແກ່ລັດຖະບານ ໃນມູນຄ່າ 2 ແສນໂດລາຕໍ່ປີ ມີໄລຍະເວລາ 27 ປີ (ນັບແຕ່ປີ 2013 ເຖິງປີ 2040) ສະນັ້ນນັບແຕ່ປີ 2013 ມາເຖິງປະຈຸບັນ ແຂວງບໍລິຄຳໄຊ ໄດ້ຈັດຕັ້ງປະຕິບັດໂຄງການດັ່ງກ່າວນີ້ຢູ່ 9 ບ້ານ ຂອງ 3 ເມືອງ: ເມືອງໄຊຈຳພອນ, ເມືອງຄຳເກີດ ແລະ ເມືອງວຽງທອງ ມີຈຳນວນພົນປະມານ 5 ພັນກວ່າຄົນ ຊຶ່ງມີເນື້ອທີ່ປະມານ 96,205.168 ຮຕ ຫລື ເທົ່າ 33% ຂອງ ເນື້ອທີ່ເຂດອ່າງໂຕ່ງນ້ຳຍວງ ໄດ້ຮັບງົບປະມານດຳເນີນໂຄງການ ໄລຍະ 3 ປີທຳອິດ (2013-2015) ເອີ້ນວ່າໂຄງການໄລຍະ ທີ 1 ມີຈຳນວນປະມານ 1.9 ຕື້ກີບ.

ໂຄງການໄລຍະ 2 ນີ້ ແຂວງບໍລິຄຳໄຊ ໄດ້ສຸມໃສ່ເຂດອ່າງໂຕ່ງນ້ຳຍວງຕອນເທິງ ເຊິ່ງ ກວມຢູ່ໃນເຂດ ຂອງ ເມືອງໄຊຈຳພອນ 100% ທີ່ມີພື້ນທີ່ຕິດຈອດໄປເຖິງ ເຂດແດນ ຂອງ ສສຫວຽດນາມ (ສາຍແດນລະຫວ່າງ ປະເທດ) ໂດຍຈະເຮັດໃຫ້ມີການປັບປຸງການຄຸ້ມຄອງໃຫ້ດີຂຶ້ນ ເຊິ່ງໄດ້ເນັ້ນໃສ່ 9 ບ້ານ ໃນເຂດ ຂອງ ເມືອງໄຊຈຳພອນ.

ການເຄື່ອນໄຫວວຽກງານຂອງ ***ໂຄງການຄຸ້ມຄອງປ່າປ້ອງກັນແຫ່ງຊາດ ນ້ຳມ່ວນ-ນ້ຳຍວງ ໄລຍະ ທີ II*** ໃນປີ 2019 ແມ່ນອີງໃສ່ແຜນການ 5 ປີ ແລະ ແຜນວຽກ ສຳລັບປີ 2019 ຂອງ ໂຄງການ ທີ່ໄດ້ສະເໜີຂໍທຶນ ແລະ ສັງລວມໄດ້ຢູ່ລຸ່ມນີ້:

- ❖ ໂຄງການຊື່: **ໂຄງການຄຸ້ມຄອງປ່າປ້ອງກັນແຫ່ງຊາດເຂດອ່າງໂຕ່ງນ້ຳຍວງ ແຂວງບໍລິຄຳໄຊ.**
- ❖ ອົງການຈັດຕັ້ງ: **ພະແນກກະສິກຳ ແລະ ປ່າໄມ້ແຂວງບໍລິຄຳໄຊ.**
- ❖ ງົບປະມານໂຄງການ: **2.796.000.000 ກີບ.**
- ❖ ໄລຍະປະຕິບັດໂຄງການຕາມສັນຍາ: **25 ກຸມພາ 2016 - 14 ມີນາ 2020.**
- ❖ ໄລຍະປະຕິບັດໂຄງການຕົວຈິງ: **14 ມີນາ 2016 - 14 ມີນາ 2020.**

ຈຸດປະສົງໂຄງການ

ເພື່ອສ້າງຄວາມອາດສາມາດໃນການຮ່ວມມືແບບມີສ່ວນຮ່ວມ ລະຫວ່າງ ລັດ ກັບ ຊຸມຊົນ ໃນການຄຸ້ມຄອງ ປົກປັກຮັກສາພັດທະນາປ່າປ້ອງກັນແຫ່ງຊາດນ້ຳມ່ວນ-ນ້ຳຍ້ວງ ພ້ອມທັງປັບປຸງຊີວິດການເປັນຢູ່ປະຊາຊົນໃຫ້ນັບມື້ນັບດີຂຶ້ນ.

ຕົວຊີ້ວັດໂຄງການ

1. ກົນໄກການອະນຸລັກຂັ້ນບ້ານໃນການຄຸ້ມຄອງປ່າປ້ອງກັນໄດ້ມີການປັບປຸງໃຫ້ມີຄວາມເຂັ້ມແຂງ ໂດຍ ການເປັນເຈົ້າການ ຂອງ ຊາວບ້ານ.
2. ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ (ເພດຍິງ), ວັດແທກເປັນ ສ່ວນຮ້ອຍ(ຢ່າງໜ້ອຍ **20** ສ່ວນ ຮ້ອຍ) ຂອງຜູ້ໄດ້ຮັບການ ຝຶກອົບຮົມ (ຕາມຜົນຮັບຕົວຊີ້ວັດ ຂອງ ອົງປະກອບ**#.1.1**)
3. ຈຳນວນປ່າໄມ້ທີ່ໄດ້ຮັບການຄຸ້ມຄອງ (ເຂດອະນຸລັກຊີວະນາໆພັນ) ຫລາຍກວ່າ **65%** ຂອງເນື້ອທີ່ດິນ ປ່າໄມ້ທັງໝົດ ຂອງ ບ້ານ.

II. ກິດຈະກຳໂຄງການ (ໃນຍິດສະເໜີໂຄງການທຳອິດ)

ອົງປະກອບ 1: ສ້າງຄວາມສາມາດໃນການຄຸ້ມຄອງປ່າປ້ອງກັນ

ກິດຈະກຳ 1.1: ຝຶກອົບຮົມກ່ຽວກັບການຄຸ້ມຄອງກອງທຶນບ້ານ(ສຳລັບປະຊາຊົນ)

ຝຶກອົບຮົມດ້ານວິຊາການໃນການຄຸ້ມຄອງບໍລິຫານກອງທຶນແກ່ບ້ານ ໂດຍການຈັດຫາເອົາ ຄູຝຶກຜູ້ທີ່ມີປະສົບການກ່ຽວຂ້ອງລົງໄປຝຶກຢູ່ກັບບ້ານ ໃຊ້ເວລາຝຶກປະມານ 4 ວັນ ຊຶ່ງ ຄາດໝາຍໃຫ້ໄດ້ບຸກຄະລາກອນ ບ້ານລະ 4 ຄົນ ໃນນັ້ນມີແມ່ຍິງ 1 ຄົນ ລວມຈຳນວນ ຝຶກໃນ 9 ບ້ານມີ 36 ຄົນ ຍິງ 9 ຄົນ.

ກິດຈະກຳ 1.2: ຝຶກອົບຮົມກ່ຽວກັບການປູກຝັງ (ສຳລັບປະຊາຊົນ)

ຝຶກອົບຮົມດ້ານວິຊາການໃນການປູກຝັງ (ເຕັກນິກການປູກເຂົ້າ, ປູກສາລີ, ປູກມັນຕົ້ນ, ປູກພືດອື່ນໆ) ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີ ປະສົບການກ່ຽວຂ້ອງລົງໄປຝຶກຢູ່ກັບບ້ານ ໃຊ້ເວລາຝຶກປະມານ 5 ວັນ ຊຶ່ງຄາດໝາຍໃຫ້ໄດ້ບຸກຄະລາກອນ ບ້ານລະ 3 ຄົນ ໃນນັ້ນ ມີແມ່ຍິງ 2 ຄົນ ລວມຈຳນວນຝຶກໃນ 9 ບ້ານມີ 27 ຄົນ ຍິງ 18 ຄົນ.

ກິດຈະກຳ 1.3: ຝຶກອົບຮົມກ່ຽວກັບການລ້ຽງສັດ (ສຳລັບປະຊາຊົນ)

ຝຶກອົບຮົມດ້ານວິຊາການໃນການລ້ຽງສັດ (ເຕັກນິກການລ້ຽງງົວ, ລ້ຽງແບ້, ລ້ຽງໝູ, ລ້ຽງ ໄກ່, ລ້ຽງເປັດ) ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີ ປະສົບການກ່ຽວຂ້ອງລົງໄປຝຶກຢູ່ກັບ ບ້ານ ໃຊ້ເວລາຝຶກປະມານ 5 ວັນ ຊຶ່ງຄາດໝາຍໃຫ້ໄດ້ບຸກຄະລາກອນ ບ້ານລະ 3 ຄົນ ໃນນັ້ນມີແມ່ຍິງ 2 ຄົນ ລວມຈຳນວນຝຶກໃນ 9 ບ້ານມີ 27 ຄົນ ຍິງ 18 ຄົນ.

ກິດຈະກຳ 1.4: ໄປປະຊຸມນຳ ປກສ

ການເຂົ້າຮ່ວມກອງປະຊຸມຕ່າງໆ, ການເຂົ້າຮ່ວມປຶກສາຫາລື ວຽກງານ ທີ່ຈຳເປັນ, ການ ຂຶ້ນໄປປຶກສາຫາລືບາງວຽກງານ ແລະ ອື່ນໆ ຢູ່ທີ່ຫ້ອງການ ກປສ ທີ່ວຽງຈັນ ແລະ ບ່ອນອື່ນໆ.

ກິດຈະກຳ 1.5: ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນບ້ານ

ກ່ອນການຈັດຕັ້ງປະຕິບັດໂຄງການ ມີຄວາມຈຳເປັນຕ້ອງໄດ້ລົງໄປຫາ ແຕ່ລະບ້ານເປົ້າ ໝາຍ ເພື່ອຮ່ວມປຶກສາຫາລືໃນການກະກຽມການດຳເນີນງານ ຂອງ ໂຄງການ ພ້ອມນີ້ກໍ ສ້າງໃຫ້ບ້ານຕ້ອງມີຄວາມເຂົ້າໃຈຕໍ່ທິດທາງແຜນການ ຈຸດປະສົງເປົ້າໝາຍ ຂອງ ໂຄງການ ທັງນີ້ກໍເພື່ອຄວາມສະດວກໃນການ ປະສານງານ ແລະ ການດຳເນີນໂຄງການຢູ່ແຕ່ລະບ້ານ ເຊິ່ງການລົງໄປຫາບ້ານ ຈະປະກອບມີ ຜູ້ຕາງໜ້າຈາກຄະນະກຳມະການຊີ້ນຳຂັ້ນແຂວງ, ຜູ້ ປະສານງານຂັ້ນເມືອງ ໂດຍມີຈຳນວນຄົນຈຳນວນ 5 ຄົນ ຈາກເມືອງ ແລະ ແຂວງ.

ກິດຈະກຳ 1.6: ທັດສະນະສຶກສາພາຍໃນ.

ເພື່ອເປັນການສ້າງຄວາມເຂັ້ມແຂງອີກຮູບແບບນຶ່ງໃຫ້ແກ່ທ້ອງຖິ່ນ ໂດຍໃຫ້ເຂົາເຈົ້າໄດ້ໄປ ຖອດຖອນບົດຮຽນຈາກບ່ອນທີ່ມີປະສົບການທີ່ມີຜົນສຳເລັດ ເພື່ອມາໝູນໃຊ້ໃນເຂດ ຂອງຕົນ ເຮັດໃຫ້ການຈັດຕັ້ງປະຕິບັດທີ່ເຂົາເຈົ້າ ເຮັດຜ່ານມາໄດ້ມີການປັບປຸງໃຫ້ມີປະ

ສິດທິຜົນດີຂຶ້ນ ເຊິ່ງຄາດວ່າຈະມີຜູ້ຮ່ວມ ກິດຈະກຳຈຳນວນບ້ານລະ 5 ຄົນ, ຍິງ 2 ຄົນ ລວມເປັນ 45 ຄົນ ຍິງ 18 ຄົນ.

ອົງປະກອບ 2. ສະໜັບສະໜຸນ ຄຸ້ມຄອງປ່າປ້ອງກັນແຫ່ງຊາດ

ກິດຈະກຳ 2.1: ວຽກໂຄສະນາເຜີຍແຜ່ ແລະ ປຸກຈິດສຳນຶກ

ໂຄສະນາປຸກຈິດສຳນຶກໃນລະດັບພື້ນຖານ ໂດຍນຳໃຊ້ເຕັກນິກຕ່າງໆ, ເຜີຍແຜ່ລະບຽບ ກົດໝາຍ ແລະ ວິທີການທີ່ດີ ກ່ຽວກັບການຄຸ້ມຄອງຊັບ ພະຍາກອນທຳມະຊາດໂດຍຊຸມ ຊົນ ແລະປ່າປ້ອງກັນ, ນຳໃຊ້ເຄື່ອງມືປະຈັກຕາເຊັ່ນ ປົດສະເຕີ, ລາຍການໂຄສະນາທາງ ວິທະຍຸ ກ່ຽວກັບກິດຈະກຳອະນຸລັກ, ກ່ອນ ແລະ ຫລັງການຈັດຕັ້ງປະຕິບັດ ຕ້ອງໄດ້ ດຳເນີນ ການປະເມີນ ຄວາມ ຮັບຮູ້ກ່ຽວຂ້ອງ.

ກິດຈະກຳ 2.2.: ຄຸ້ມຄອງຈັດສັນທີ່ດິນ

- ລົງປຶກສາຮ່ວມປະຊາຊົນ ເພື່ອວາງແຜນການນຳໃຊ້ທີ່ດິນພ້ອມສ້າງແຜນທີ່
- ຮ່ວມກຳນົດເຂດການນຳໃຊ້ດິນແຕ່ລະປະເພດ ພາຍໃນບ້ານ.
- ຮ່ວມສ້າງລະບຽບການຄຸ້ມຄອງນຳໃຊ້ທີ່ດິນຂັ້ນບ້ານ.
- ຮ່ວມສ້າງຕັ້ງຄະນະກຳມະການຮັບຜິດຊອບຂັ້ນບ້ານ.
- ຮ່ວມກຳນົດເຂດຄຸ້ມຄອງປ່າໄມ້ ແລະ ຟື້ນຟູປ່າໄມ້.
- ຮ່ວມຈັດສັນເຂດຄຸ້ມຄອງແລະນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງ
- ສ້າງ ແລະ ປັກປ້າຍຊີ້ບອກປະເພດເນື້ອທີ່ຕ່າງໆ ຂອງ ບ້ານ.
- ຮ່ວມສ້າງສັນຍາຮ່ວມກັບຊຸມຊົນໃນການຄຸ້ມຄອງປ່າປ້ອງກັນແຫ່ງຊາດ
- ກຸ່ມອະນຸລັກຂອງບ້ານເຄື່ອນໄຫວກວດກາລາດຕະເວນ

ກິດຈະກຳ 2.3.: ປັບປຸງຊີວິດການຢູ່ ແລະ ສ້າງກອງທຶນອະນຸລັກ

- ລົງຮ່ວມເກັບກຳຂໍ້ມູນເສດຖະກິດ-ສັງຄົມ ເພື່ອວາງແຜນປັບປຸງຊີວິດການເປັນຢູ່ຊຸມ ຊົນ.
- ສະນັບສະໜຸນທຶນສ້າງເປັນກອງທຶນອະນຸລັກບ້ານ.

ກິດຈະກຳ 2.4: ສ້າງຈຸດກວດກາ ແລະ ການກວດກາລາດຕະເວນ

- ອອກແບບ, ກຳນົດຈຸດສ້າງຈຸດກວດກາຮ່ວມກັບເມືອງ ແລະ ບ້ານກ່ຽວຂ້ອງ
- ປະມູນການກໍ່ສ້າງ
- ຕິດຕາມການກໍ່ສ້າງ
- ມອບ-ຮັບຈຸດກວດກາທີ່ກໍ່ສ້າງສຳເລັດ
- ປະກອບພະນັກງານເຂົ້າປະຈຳ 4 ສະຫາຍ/ຈຸດກວດກາ
- ອອກກວດກາລາດຕະເວນປົກກະຕິ**ອົງປະກອບ 3.**

ອົງປະກອບ 3: ຄຸ້ມຄອງບໍລິຫານໂຄງການ

ການບໍລິຫານ ແລະການຄຸ້ມຄອງໂຄງການ ຈະຕ້ອງໄດ້ປະຕິບັດຕາມຄູ່ມືການຈັດຕັ້ງປະຕິບັດ ໂຄງການ ລວມທັງການຄຸ້ມຄອງການເງິນ, ການຈັດຊື້-ຈັດຈ້າງ, ການກວດກາຕິດຕາມ ແລະ ການລາຍງານ ໂດຍໄດ້ຮັບການຝຶກອົບຮົມຈາກ ກປສ ແລະ ຮັບປະກັນກິດຈະກຳດັ່ງຕໍ່ໄປນີ້:

3.1. ສ້າງທີມຈັດຕັ້ງປະຕິບັດໂຄງການ ແລະ ສ້າງຄວາມເຂົ້າໃຈຮ່ວມກັນໃນທີມງານ

3.2. ຈັດຊື້ອຸປະກອນ ໂຄງການ

3.3. ສ້າງບົດລາຍງານປະຈຳ 6 ເດືອນ ແລະ ປີ ກ່ຽວກັບຄວາມຄືບໜ້າກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດ ລວມທັງຕົວຊີ້ວັດ ແລະ ຜົນທີ່ໄດ້ຮັບ ແລະ ການເງິນ (ລວມທັງການຈັດຊື້) ຊຶ່ງຈະໄດ້ສົ່ງໃຫ້ຫ້ອງການ ກປສ ແລະ ຂຶ້ນແຜນການ 6 ເດືອນ ແລະ ປີ ຕໍ່ໄປ ໂດຍອີງໃສ່ແຜນລວມ.

3.4. ປະສານກັບອົງການກ່ຽວຂ້ອງອື່ນໆ ກ່ຽວກັບການຄຸ້ມຄອງໂຄງການ ໂດຍສະເພາະ ກັບ ກປສ

3.5. ປະເມີນຜົນ (ອາດໃຊ້ຊ່ຽວຊານໃນການປະເມີນຜົນ) ດຳເນີນການປະເມີນຜົນສຳເລັດຂອງການຈັດຕັ້ງປະຕິບັດ ໂດຍ ກຄຊປ, ພະແນກແຜນການ-ການລົງທຶນແຂວງ ແລະ ກປສ ໂດຍອີງໃສ່ບົດສະຫຼຸບໂຄງການ ລວມທັງຖອດຖອນບົດຮຽນເພື່ອຜັນຂະຫຍາຍ ໃນຕໍ່ໜ້າ. ໃນນີ້ ກປສ ຈະເຮັດບົດປິດໂຄງການ, ຊຶ່ງໃນນັ້ນ ຈະປະເມີນຜົນຂອງການຈັດຕັ້ງໂຄງການຍ່ອຍ ລວມທັງຈັດລະອຽດກວ່າເກົ່າ, ແບບຟອມຈະໄດ້ສ້າງຂຶ້ນ.

III. ກິດຈະກຳ ແລະ ຜົນການເຄື່ອນໄຫວໄລຍະ 1 ປີ ໂຄງການທີ່ໄປຕິບັດໄດ້ຕາມຕົວຈິງ ໃນປີ 2019 (ກິດຈະກຳທັງໝົດໃນແຜນປີໃຫ້ລະບຸທັງໝົດ ແລະ ໃຫ້ອະທິບາຍລະອຽດກິດຈະກຳໃດສຳເລັດແລ້ວ, ກິດຈະກຳໃດກຳລັງດຳເນີນ ແລະ ກິດຈະກຳໃດຍັງບໍ່ທັນສຳເລັດ ພ້ອມທັງໃຫ້ບອກເຫດຜົນ)

ລະຫັດ ກິດຈະກຳ	ລາຍການ	ຜົນສຳເລັດຕົວຈິງ (ຄິດໄລ່ເປັນເປີເຊັນ)	ບໍ່ສຳເລັດ (ສຳລັບກິດຈະກຳບໍ່ສຳເລັດໃນປີ 2018 ແລະ ສະເໜີຍ້າຍມາປີ 2019)	ໝາຍ ເຫດ
A	**ອົງປະກອບທີ 1 : ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງປ້ອງກັນ**			
C1.04	ໄປປະຊຸມນຳ ປກສ ແລະ ພາກສ່ວນທີ່ກ່ຽວຂ້ອງ	- ໄປປະຊຸມນຳ ກປສ ທີ່ ນະຄອນຫຼວງວຽງຈັນເພື່ອປຶກສາຫາລືດ້ານການຄຸ້ມຄອງວຽກງານການເງິນຂອງໂຄງການນຳວິຊາການດ້ານການເງິນຂອງ ກປສ ຈຳນວນ 2 ຄັ້ງ. - ໄປປະຊຸມສະຫຼຸບປະຈຳປີ 2018 ຂອງບັນດາໂຄງການຍ່ອຍ ທີ່ເມືອງວັງວຽງ	ສຳເລັດ	
C1.07	ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນເມືອງ	- ສຳເລັດຈັດກອງປະຊຸມ 6 ເດືອນຕົ້ນປີ 2019 ທີ່ເມືອງໃຊຈຳພອນ	ສຳເລັດ	
C1.09	ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນບ້ານ ແລະ ຕິດຕາມ	1. ກອງປະຊຸມຕິຕາມການກະກຽມຈັດຕັ້ງປະຕິບັດການສ້າງເປັນບ້ານອານຸລັກ ຈຳນວນ 9 ບ້ານ		

		ຂອງເມືອງໄຊຈໍາພອນ,ມີຜູ້ເຂົ້າຮ່ວມ 120 ທ່ານ ຍິງ 34 ທ່ານ ໃນນີ້: - ມີຈໍານວນ 6 ບ້ານ ທີ່ໄດ້ສໍາເລັດການປຶກສາຫາລືຮ່ວມກັນປະຊາຊົນພາຍໃນບ້ານ ແລະ ການກວດກາຕົວຈິງຕໍ່ກັບມາດຖານໃນການສ້າງເປັນບ້ານອານຸລັກໃນນັ້ນ. + ບ້ານ ສົບເຕີງ ແມ່ນປະຕິບັດໄດ້ 100%, + ບ້ານ ໂພນໝັ້ນ ປະຕິບັດໄດ້ 50%, + ບ້ານ ວັງບານປະຕິບັດໄດ້ 100%, + ບ້ານ ນ້ໍາສັກ ປະຕິບັດໄດ້ 100%, + ບ້ານ ນ້ໍາອ້ອມ ປະຕິບັດໄດ້ 100%, + ບ້ານ ໂພນຄໍາປະຕິບັດໄດ້ 70%, - ມີຈໍານວນ 3 ບ້ານແມ່ນຍັງບໍ່ໄດ້ຈັດຕັ້ງປະຕິບັດ.(ບ້ານ ສົບຄີ, ບ້ານ ພຽງດີ,ບ້ານ ນ້ໍາປັ່ນ)		
		2. ລົງຕິດຕາມການກະກຽມຈັດຕັ້ງປະຕິບັດການສ້າງເປັນບ້ານອະນຸລັກຂອງເມືອງຄໍາເກີດໂດຍ ສົມທົບກັບເມືອງ ຈໍານວນ 6 ບ້ານຄື:ໂພນງາມ,ໜອງເມັກ,ນ້ໍາເດີນ,ນາແປ (ສໍາເລັດ) ໂພນສະອາດ,ນາງອຍ (ບໍ່ສໍາເລັດ)	ສໍາເລັດ	
C	**ອົງປະກອບທີ 3 : ການຕິດຕາມບ້ານເປົ້າໝາຍໃນເຂດອ່າງໂຕ່ງນ້ໍ້ຍ້ອງ**			
C3	ລົງຢ້ຽມຢາມບ້ານເປົ້າໝາຍໂຄງການທີ່ຜ່ານມາ	ລົງຢ້ຽມຢາມບ້ານເປົ້າໝາຍຂອງໂຄງການ 9 ບ້ານ ເມືອງໄຊຈໍາພອນ	ສໍາເລັດ	
D	**ອົງປະກອບ 4. ການບໍລິຫານ ແລະ ຄຸ້ມຄອງໂຄງການ**			
C4.01	ຈັດພິມ ແລະ ສໍາເນົາຕ່າງໆຂອງກອງປະຊຸມ	ປະຕິບັດຕາມແຜນການ	ສໍາເລັດ	

C4.05	ບຳລຸງຮັກສາພາຫະນະ	ປະຕິບັດຕາມແຜນການ	ສຳເລັດ	
C4.06	ອຸປະກອນຮັບໃຊ້ຫ້ອງການຕ່າງໆ	ປະຕິບັດຕາມແຜນການ.	ສຳເລັດ	
C4.09	ປະເມີນຜົນ	ປະຕິບັດຕາມແຜນການ.	ລໍຖ້າຈັດຕັ້ງປະຕິບັດ	

IV. ຕົວຊີ້ວັດ ທີ່ກຳນົດໄວ້ໃນກອບຜົນໄດ້ຮັບຂອງໂຄງການ

ຕົວຊີ້ວັດ	ແຜນການ	ສຳເລັດ	ໝາຍເຫດ
ຕົວຊີ້ວັດທີ 1	**48**	ຍັງບໍ່ທັນໄດ້ຖືກປະເມີນ ຈາກ ກປສ ສະນັ້ນຈຶ່ງ ບໍ່ ມີຄະແນນສະສົມ ອອກມາເທື່ອ	
ຕົວຊີ້ວັດທີ 2	**9**	**120**	
ຕົວຊີ້ວັດທີ 3	**3**	**34**	

V. ສະຫຼຸບການນຳໃຊ້ງົບປະມານຂອງໂຄງການພາຍໃນປີ 2019

- ງົບປະມານທັງໝົດ (ທີເຊັນສັນຍາ): 2.796.000.000 ກີບ.
- ເງິນທີ່ໄດ້ຮັບທັງໝົດພາຍໃນ 1 ປີ: 252.500.000 ກີບ.
- ກປສ ຈ່າຍໂດຍກົງ: 0 ກີບ.
- ເງິນທີ່ໄດ້ສະຫຼຸບ: 204.366.900 ກີບ.
- ເງິນທີ່ຍັງບໍ່ໄດ້ສະຫຼຸບ: 48.133.100 ກີບ.
- ງົບປະມານ ປີ 2020: 30.184.510 ກີບ.
- ມື້ສົ່ງປິດລາຍງານການເງິນສຸດທ້າຍ: 16 ມັງກອນ 2020.

VI. ສັງລວມ ການປະເມີນ ໂຄງການໝົດປີ (ເຫັນເປີເຊັນນາໃຊ້ສຸດຄິດໄລ່)

ຕາມແຜນປີ 2019 ມີທັງໝົດ 8 ກິດຈະກຳ ສາມາດຈັດຕັ້ງປະຕິບັດໄດ້ 7 ກິດຈະກຳ ຍັງ 1 ກິດຈະກຳບໍ່ ທັນສຳເລັດ ໝາຍວ່າວຽກໃນປີ2019ສຳເລັດ 87.5%

VII. ບົດຮຽນທີ່ຖອດຖອນພາຍໃນປີ 2019

1. ເນື້ອທີ່ປ່າປ້ອງກັນແຫ່ງຊາດນ້ຳມ່ວນ-ນ້ຳຍ້ອງ ໄດ້ຮັບການຈັດຕັ້ງປະຕິບັດຄຸ້ມຄອງ ແລະ ໄດ້ມີຜົນສຳເລັດໃນການ ຄຸ້ມຄອງໄດ້ໂດຍພື້ນຖານ, ພ້ອມນີ້ຍັງໄດ້ມີຜົນສຳເລັດໃນການສ້າງແຜນການຄຸ້ມຄອງ, ມີງົບປະມານທີ່ສະນັບສະໜຸນ ເຂົ້າໃນການຄຸ້ມຄອງ ທີ່ມີຄວາມແນ່ນອນຊັດເຈນ ໄປເຖິງອີກ 25 ປີ.
2. ພະນັກງານຂັ້ນແຂວງ ແລະ ເມືອງ ໄດ້ມີບົດຮຽນ ແລະ ປະສົບການ ດ້ານ: ຄຸ້ມຄອງໂຄງການ, ການສ້າງແຜນ, ການຂຽນບົດສະເໜີໂຄງການ, ການຕິດຕາມ ແລະ ການລາຍງານຜົນງານ ໃນການຈັດຕັ້ງປະຕິບັດວຽກງານໃນໂຄງການ, ວິທີການປະສານງານວຽກງານ, ເຕັກນິກວິຊາການ(ການໂຄສະນາເຜີຍແຜ່, ການກຳນົດການຄຸ້ມຄອງນຳໃຊ້ທີ່ດິນ, ການສ້າງແຜນພັດ ທະນາຕ່າງໆ).
3. ປະຊາຊົນໄດ້ຮັບການສ້າງຄວາມເຂັ້ມແຂງ ທາງດ້ານພື້ນຖານໃນການຄຸ້ມຄອງປ່າໄມ້, ສັດນ້ຳ-ສັດປ່າ(ມີແຜນອະນຸລັກ, ມີເຂດຮັກສາປ່າ, ມີຄະນະຮັບຜິດຊອບ, ມີລະບຽບ), ພ້ອມນີ້ຍັງມີພື້ນຖານໃນການສ້າງຮູບແບບການ ດຳລົງຊີວິດທີ່ຄົງທີ່ ແລະ ຍືນຍົງ(ແຜນກິດຈະກຳປັບປຸງຊີວິດການເປັນຢູ່ ຂອງ ບ້ານ, ມີການສ້າງກອງທຶນອະນຸລັກ).

<u>ຂໍ້ຄົງຄ້າງ ແລະ ວິທີການແກ້ໄຂ</u>

ການຈັດຕັ້ງປະຕິບັດວຽກໃນໂຄງການ ແມ່ນມີບັນຫາທາງດ້ານການຄ່ຽນເງິນ ເຊິ່ງບໍ່ສາມາດຈັດຕັ້ງປະຕິບັດໄປຕາມແຜນການທີ່ວາງໄວ້ໄດ້ ຍ້ອນຈາກສາເຫດຂອງການປ່ຽນແປງວຽກງານຄຸ້ມຄອງການເງິນ ລະຫວ່າງ ກປສ ແລະ ກະຊວງການເງິນ.

VIII. ຂໍ້ສະເໜີ ຕໍ່ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ

ຂໍສືບຕໍ່ໂຄງການໄລຍະ ທີ 3 ແລະ ຂໍປິດໂຄງການຕາມແຜນການທີ່ກຳນົດໄວ້ ຄືໃນ ເດືອນ 3 ປີ 2020.

IX. ແຜນການຈັດຕັ້ງປະຕິບັດໂຄງການປີ 2020 (ເອກະສານຄັດຕິດ)

ລ/ດ	ລະຫັດ ກິດຈະກຳ	ເນື້ອໃນ	ມື້ເປົ້າໝາຍເພື່ອ ສຳເລັດກິດຈະກຳ	ໝາຍເຫດກ່ຽວກັບ ຈຸດອ່ອນ ແລະ ຈຸດ ດີໃນການຈັດຕັ້ງ ປະຕິບັດ
A	**ອົງປະກອບ 1: ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງປ່າປ້ອງກັນ**			
1	C1.04	ໄປປະຊຸມນຳ ກປສ ແລະ ພາກສ່ວນ ທີ່ກ່ຽວຂ້ອງ	ເດືອນ 1/2020	
2	C1.05	ສ້າງຄວາມເຂັ້ມແຂງໃນການສືບຕໍ່	ເດືອນ 1/2020	

		ໂຄງການໄລຍະໃໝ່		
3	C4.09	ປະເມີນຜົນໂຄງການ	ເດືອນ 1/2020	
D	**ອົງປະກອບທີ່ 4 : ການບໍລິຫານແລະຄຸ້ມຄອງໂຄງການ**			
1	C4.01	ຈັດພິມ ແລະ ສຳເນົາຕ່າງໆຂອງກອງປະຊຸມ	ເດືອນ 1/2020	
2	C4.05	ບຳລຸງຮັກສາພາຫະນະ ແລະ ອຸປະກອນ	ເດືອນ 1/2020	
3	C4.06	ອຸປະກອນຮັບໃຊ້ຫ້ອງການຕ່າງໆ	ເດືອນ 1/2020	

ແຂວງ ບໍລິຄຳໄຊ , ວັນທີ..23..ມັງກອນ 2020

ຫົວໜ້າກຸ່ມວຽກ
ປ່າປ້ອງກັນ ແລະ ອະນຸລັກສັດນ້ຳ-ສັດປ່າ

ສຸທີ ສຸວັນນະວົງ
Southi SOUVANNAVONG

ຫົວໜ້າໂຄງການ
ຄຸ້ມຄອງປ່າປ້ອງກັນນ້ຳມ່ວນ-ນ້ຳຍ້ອງ

ມະນີແສງເພັດ ພະຄູນທອງ
Mr. Manyseng-phet PHAKHOUNTHONG

ຫົວໜ້າພະແນກກະສິກຳ ແລະ ປ່າໄມ້
(ຄະນະຊີ້ນຳໂຄງການ)

ພອນສະຫວັນ ຫອມນະບຸນລັດ
Mr Phonsavanh HOMNABOUNLATH

ຫົວໜ້າຂະແໜງປ່າໄມ້ແຂວງ

ສອນໄຊ ພົມມະວົງ
Sonexay PHOMMAVONG

ຮູບພາບການເຄື່ອນໄຫວຂອງໂຄງການ ໃນໄລຍະ 1 ປີ 2019 (ຄັດເລືອກເອົາເປັນແຕ່ລະກິດຈະກຳຕາມອົງປະກອບ ແລະ ອະທິບາຍວ່າແມ່ນຮູບກິດຈະກຳຫຍັງໃສ່ແຕ່ລະຫົວຂໍ້ຂອງຮູບພາບ.



- ກິດຈະກຳ C1.07: ກອງປະຊຸມ 6 ເດືອນ ຕົ້ນປີ 2019 ທີ່ເມືອງໄຊຈຳພອນ



- ກິດຈະກຳ C1.07: ກອງປະຊຸມ 6 ເດືອນ ຕົ້ນປີ 2019 ທີ່ເມືອງໄຊຈຳພອນ



- ກິດຈະກຳ C1.07: ກອງປະຊຸມ 6 ເດືອນ ຕົ້ນປີ 2019 ທີ່ເມືອງໄຊຈຳພອນ



- ອົງການກວດສອບລົງຫາຢ້ຽມຢາມບ້ານເປົ້າໝາຍຂອງໂຄງການ ທີ່ເມືອງປາກກະດິງ



- ກິດຈະກຳ C3: ລົງຢ້ຽມຢາມບ້ານເປົ້າໝາຍຂອງໂຄງການ ທີ່ເມືອງໄຊຈຳພອນ



- ກິດຈະກຳ C1.04: ກອງປະຊຸມສະຫຼຸບປະຈຳປີ 2018 ຂອງບັນດາໂຄງການຍ່ອຍ ທີ່ເມືອງວັງວຽງ

X. ແຜນການຈັດຕັ້ງປະຕິບັດສົກປີ 2020 (ຄັດຕິດແຜນມາພ້ອມໂດຍນຳໃຊ້ແບບຟອມ ກປສ ສົ່ງໃຫ້)